# ບົດລາຍງານ
# ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 2021-23, ໄລຍະ 3 ເດືອນຕົ້ນປີ 2024 ແລະ ແຜນວຽກຈຸດສຸມ 2024-25

ຕາງໜ້າກອງເລຂາຂອງວຽກງານວາລະແຫ່ງຊາດວ່າດ້ວຍການ ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ກະຊວງແຜນການ ແລະ ການລົງທຶນ ຂໍຣຽນລາຍງານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກຈຸດສຸມຂອງວາລະແຫ່ງຊາດ ໃນໄລຍະປີ 2021-23, ໄລຍະ 3 ເດືອນຕົ້ນປີ 2024 ແລະ ແຜນວຽກຈຸດສຸມ ໃນປີ 2024 ແລະ 2025 ເຊິ່ງບົດລາຍງານປະກອບມີ 4 ພາກ ຄື:

## I. ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ໄລຍະ 2021-23

ການປະຕິບັດວາລະແຫ່ງຊາດ ເນື້ອແທ້ແມ່ນມາດຕະການທີ່ຮອບດ້ານ ແລະ ຄົບຊຸດ ສຳລັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຊຶ່ງແນ່ໃສ່ສ້າງຖານການຜະລິດຕິດພັນກັບມີຖານລາຍຮັບທີ່ໝັ້ນທ່ຽງ, ສຸມໃສ່ການປະຢັດຕ້ານການຟຸມເຟືອຍ, ສ້າງການສະສົມໃຫ້ຫຼາຍຂຶ້ນ ແນ່ໃສ່ແກ້ໄຂໜີ້ສິນ ທັງສືບຕໍ່ປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ໄປຕາມທິດທີ່ພັກເຮົາໄດ້ກຳນົດໄວ້. ຜ່ານການຈັດຕັ້ງປະຕິບັດຕົວຈິງ ໃນໄລຍະປີ 2021-23, ສາມາດຕີລາຄາໄດ້ຜົນສຳເລັດທີ່ພົ້ນເດັ່ນ ດັ່ງນີ້:

**1.1 ວຽກຈຸດສຸມການສົ່ງເສີມການຜະລິດ-ການບໍລິການ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ.**

**ຂະແໜງກະສິກຳ ແລະ ປ່າໄມ້:** ສຸມໃສ່ການສົ່ງເສີມ ແລະ ຂະຫຍາຍການຜະລິດສິນຄ້າກະສິກຳຢູ່ໃນແຕ່ລະທ້ອງ ຖິ່ນທີ່ມີທ່າແຮງ ໂດຍສະເພາະ ການຜະລິດສະບຽງອາຫານໃຫ້ພຽງພໍໃນການສະໜອງຊົມໃຊ້ພາຍໃນເປັນຕົ້ນ: ເຂົ້າ, ພືດຜັກ, ຊີ້ນ, ປາ ແລະ ໄຂ່; ພ້ອມທັງກຳນົດລາຍການສິນຄ້າເພື່ອຜະລິດທົດແທນການນຳເຂົ້າປະເພດພືດ ແລະ ຜັກ ລວມທັງ ແນວພັນພືດ ແລະ ສັດ. ນອກຈາກນັ້ນ, ກໍໄດ້ຊຸກຍູ້ຜູ້ປະກອບການພາຍໃນຂະຫຍາຍການຜະລິດປຸ໋ຍ, ຝຸ່ນ ແລະ ຫົວອາຫານສັດ ເພື່ອສະໜອງຕະຫຼາດພາຍໃນໃຫ້ຫຼາຍຂຶ້ນໂດຍ:

- ສາມາດຜະລິດຫົວອາຫານສັດ ໄດ້ 391.000 ໂຕນ ເພີ່ມຂຶ້ນ 37,75% ທຽບກ່ອນວາລະແຫ່ງຊາດ (ປີ 2020) ກວມ 68% ຂອງຄວາມຕ້ອງການພາຍໃນ; ຜະລິດຝຸ່ນໄດ້ 974.000 ໂຕນ ເພີ່ມຂຶ້ນ ປະມານ 300% ທຽບກ່ອນວາລະແຫ່ງຊາດ, ກວມເອົາ 48,7% ຂອງຄວາມຕ້ອງການພາຍໃນ.

ໄປຄຽງຄູ່ກັນນັ້ນ, ໄດ້ສຳເລັດການເຈລະຈາດ້ານສຸຂະອະນາໄມ ແລະ ສຸຂະອະນາໄມພືດ (SPS) ເພື່ອເປີດຕະຫຼາດ ເພີ່ມຂຶ້ນ 25 ລາຍການ ໃນໄລຍະປະຕິບັດວາລະແຫ່ງຊາດ (ທັງໝົດ ມີ 64 ລາຍການ) ແລະ ຊຸກຍູ້ ແລະ ປັບປຸງຖານການຜະລິດກະສິກຳ ແລະ ກຸ່ມການຜະລິດເພື່ອສົ່ງອອກຈຳນວນໜຶ່ງ.

ສະນັ້ນ, ຈຶ່ງເຮັດໃຫ້ການສົ່ງອອກຜະລິດຕະພັນກະສິກຳ ສາມາດບັນລຸໄດ້ ປະມານ 4 ຕື້ໂດລາສະຫະລັດ ໃນໄລຍະ 2021-2023 ເພີ່ມຂຶ້ນ ປະມານ 575 ລ້ານໂດລາສະຫະລັດ ສະເລ່ຍຕໍ່ປີ ທຽບໃສ່ກ່ອນໄລຍະວາລະແຫ່ງຊາດ. ໃນນັ້ນ, ການສົ່ງອອກມັນຕົ້ນ ບັນລຸປະມານ 1 ຕື້ໂດລາ ຫຼືສະເລ່ຍ ປະມານ 336,25 ລ້ານໂດລາຕໍ່ປີ ລື່ນມູນຄ່າການສົ່ງອອກ ກ່ອນວາລະແຫ່ງຊາດ ປະມານ 205%; ຢາງພາລາ ບັນລຸໄດ້ 312,94 ລ້ານໂດລາຕໍ່ປີ ລື່ນປີ 2020 ປະມານ 58,8%; ໝາກກ້ວຍ ສົ່ງອອກປະມານ 247 ລ້ານໂດລາສະຫະລັດຕໍ່ປີ

ລື່ນການສົ່ງອອກ ໄລຍະກ່ອນວາລະແຫ່ງຊາດ ປະມານ 28,7%. ພ້ອມນີ້, ການສົ່ງອອກຜະລິດຕະພັນປຸງແຕ່ງກະສິກຳ-ປ່າໄມ້ ກໍມີທ່າແຮງຂະຫຍາຍຕົວ ເຊິ່ງບັນລຸໄດ້ ປະມານ 1.064,95 ລ້ານໂດລາສະຫະລັດ ໃນໄລຍະ 2021-23 ເພີ່ມຂຶ້ນ 41,62% ແລະ ກວມເອົາ 26,26% ຂອງມູນຄ່າການສົ່ງອອກຜະລິດຕະພັນກະສິກຳທັງໝົດ.

**<u>ຂະແໜງອຸດສາຫະກຳປຸງແຕ່ງ</u>:** ໄດ້ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ຜູ້ປະກອບການພາຍໃນ ຂະຫຍາຍການຜະລິດສິນຄ້າອຸດສາຫະກຳປຸງແຕ່ງ ເພື່ອທົດແທນການນຳເຂົ້າ ຈຳນວນໜຶ່ງ ເຊິ່ງມີຄວາມຄືບໜ້າດັ່ງນີ້:

(1) ການຜະລິດຊີມັງ: ໃນໄລຍະປະຕິບັດວາລະແຫ່ງຊາດ (2021-2023) ສາມາດຜະລິດຕົວຈິງ ສະເລ່ຍ 5.299.157 ໂຕນ/ປີ ທຽບໃສ່ ປີ 2020 ເພີ່ມຂຶ້ນ ປະມານ 21,48% ຕໍ່ປີ ສາມາດຕອບສະໜອງຕະຫຼາດພາຍໃນໂດຍທົ່ວໄປ.

(2) ເຫຼັກເສັ້ນ ແລະ ເຫຼັກຮູບປະພັນ: ສາມາດຜະລິດໄດ້ ສະເລ່ຍປະມານ 368.450 ຕໍ່ປີ ເພີ່ມຂຶ້ນ 39,3% ທຽບໃສ່ກ່ອນວາລະແຫ່ງຊາດ ໃນປີ ບັນລຸໄດ້ 264.527 ໂຕນ, ເຊິ່ງສາມາດຕອບສະໜອງການຊົມໃຊ້ພາຍໃນ ປະມານ 71,7%.

(3) ທໍ່ຢາງ: ສາມາດຜະລິດທໍ່ຢາງໄດ້ ປະມານ 10.327 ໂຕນຕໍ່ປີ ທຽບໃສ່ປີ 2020 (8.135 ໂຕນ) ເພີ່ມຂຶ້ນ 26,9% ຕໍ່ປີ ເຊິ່ງສາມາດຕອບສະໜອງການຊົມໃຊ້ພາຍໃນໄດ້ 36,6%.

(4) ນ້ຳສີ: ໃນໄລຍະ ປີ 2021-2023 ສາມາດຜະລິດໄດ້ສະເລ່ຍ ປະມານ 19.000 ໂຕນຕໍ່ປີ, ເພີ່ມຂຶ້ນ 11,65% ຕໍ່ປີ ກວມເອົາ 61,35% ຂອງຕະຫຼາດພາຍໃນ.

**<u>ຂະແໜງພະລັງງານ ແລະ ບໍ່ແຮ່</u>**: ໄດ້ອະນຸຍາດເຊັນສັນຍາໂຄງການພັດທະນາບໍ່ແຮ່ໃນຮູບແບບທົດລອງທັງໝົດ 93 ບໍລິສັດ ເຊິ່ງສາມາດສົ່ງອອກແຮ່ທາດໃນໂຄງການທົດລອງ ໄດ້ປະມານ 155 ລ້ານໂດລາສະຫະລັດ ເທົ່າກັບ 2,7% ຂອງການສົ່ງອອກແຮ່ທາດທັງໝົດ (2021-23); ໄດ້ມອບພັນທະງົບປະມານລັດທັງໝົດ 204,52 ລ້ານໂດລາສະຫະລັດ ແລະ 962,21 ຕື້ກີບ.

**<u>ຂະແໜງການບໍລິການທ່ອງທ່ຽວ</u>:** ໄດ້ສຸມໃສ່ປັບປຸງກິດຈະກຳ, ໂຄງລ່າງພື້ນຖານ, ສິ່ງອານວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ຊຸກຍູ້ພາກທຸລະກິດຕິດພັນກັບຂະແໜງການທ່ອງທ່ຽວ ໃນແຕ່ລະແຂວງທີ່ມີທ່າແຮງ ປັບປຸງການບໍລິການທ່ອງທ່ຽວຢ່າງຮອບດ້ານ ພາຍຫຼັງການປະຕິບັດມາດຕະການເປີດປະເທດ ຫຼັງຈາກການລະບາດພະຍາດໂຄວິດ-19 ໃນກາງປີ 2022, ເຊິ່ງເຮັດໃຫ້ຈານວນນັກທ່ອງທ່ຽວຕ່າງ ປະເທດເຂົ້າມາ ສປປລາວ ໃນປີ 2023 ບັນລຸໄດ້ ປະມານ 3,5 ລ້ານເທື່ອຄົນ ເພີ່ມຂຶ້ນເກີນ 2 ເທົ່າ ທຽບໃສ່ປີ 2022, ຄາດວ່າສ້າງລາຍຮັບເປັນເງິນຕາຕ່າງປະເທດ ປະມານ 900-1.000 ລ້ານໂດລາສະຫະລັດ.

### 1.2 ວຽກຈຸດສຸມການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ

ໄດ້ຕັ້ງໜ້າປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານ ເຊິ່ງໄດ້ສ້າງເງື່ອນໄຂໃນການເກັບຖານລາຍຮັບໃໝ່ຈຳນວນໜຶ່ງ ແລະ ທັນເປັນທັນສະໄໝໃນການເກັບລາຍຮັບ ເພື່ອອັດການຮົ່ວໄຫຼ ແລະ ເພີ່ມລາຍຮັບງົບປະມານ ເປັນຕົ້ນ: ການປັບປຸງລະບົບການແຈ້ງພາສີ, ການຄຸ້ມຄອງການເກັບພັນທະຈາກດ້ານສາກົນ, ການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ, ການມອບພັນທະຈາກໂຄງການທົດລອງ, ການທົດລອງມອບຫົວໜ່ວຍວິສາຫະກິດໃຫ້ທ້ອງຖິ່ນເກັບລາຍຮັບ, ການ

ຂະຫຍາຍຖານອາກອນ ແລະ ເຊື່ອມຂໍ້ມູນດ້ານລາຍຮັບຜ່ານລະບົບຄຸ້ມຄອງທັນສະໄໝ ແລະ ອື່ນໆ ເຊິ່ງສ້າງເງື່ອນໄຂໃຫ້ມີຜົນສຳເລັດດັ່ງນີ້:

- ໃນປີ 2021 ສາມາດເກັບລາຍຮັບທັງໝົດ ປະມານ 27.178 ຕື້ກີບ ເທົ່າກັບ 14,13 ຂອງ GDP;
- ປີ 2022 ບັນລຸໄດ້ ປະມານ 32.486 ຕື້ກີບ ເທົ່າກັບ 15,4 ຂອງ GDP;
- ປີ 2023 ບັນລຸໄດ້ ປະມານ 48.762 ຕື້ກີບ ເທົ່າກັບ 18,5 ຂອງ GDP.

**1.3 ວຽກຈຸດສຸມການສົ່ງເສີມການປະຢັດ, ຕ້ານການຟຸ່ມເຟືອຍ ແລະ ການແກ້ໄຂໜີ້ສິນ**

ອັນພົ້ນເດັ່ນ ໄດ້ສຸມໃສ່ການປະຕິບັດນິຕິກຳດ້ານການປະຢັດລາຍຈ່າຍ ໂດຍສະເພາະ ດຳລັດເລກທີ 205/ລບ ແລະ ດຳລັດ 599/ລບ ເຊິ່ງໄດ້ເຮັດໃຫ້ລາຍຈ່າຍງົບປະມານ ຮັດກຸມຂຶ້ນໃນແຕ່ລະປີ ໂດຍສະເພາະ ລາຍຈ່າຍດ້ານບໍລິຫານ (ໃນປີ 2021 ສາມາດຫຼຸດລາຍຈ່າຍໄດ້ 2.076 ຕື້ກີບ, ປີ 2022 ຫຼຸດປະມານ 3.131 ຕື້ກີບ ແລະ ປີ 2023 ປະຢັດໄດ້ ປະມານ 806,93 ຕື້ກີບ), ເຊິ່ງໄດ້ເຮັດໃຫ້ການຂາດດຸນງົບປະມານ ສາມາດຮັກສາໄດ້ຢູ່ໃນລະດັບ ຕ່ຳກວ່າ 3% ທີ່ກຳນົດໄວ້ ແລະ ໃນປີ 2023 ສາມາດປະຕິບັດໄດ້ເກີນດຸນງົບປະມານ ໂດຍໄດ້ສ້າງເງື່ອນໄຂໃຫ້ສາມາດຄຸ້ມຄອງລະດັບໜີ້ສິນບໍ່ໃຫ້ເພີ່ມຂຶ້ນ ໃນໄລຍະປີ 2021-23.

- ການປະຕິບັດດຳລັດວ່າດ້ວຍລົດຂອງລັດສະບັບເລກທີ 599/ນຍ, ສາມາດເກັບກຳຂໍ້ມູນລົດລັດ ເປັນຈຳນວນ 37.427 ຄັນ (ລົດໃຫ່ຍ 11.175 ຄັນ). ໃນນັ້ນ, ລົດຢູ່ໃນບັນດາກະຊວງ ແລະ ອົງການຂັ້ນສູນກາງມີຈຳນວນ 8.959 ຄັນ. ພະນັກງານບຳນານເອົາໄປນຳໃຊ້ ລົດຈັກ 1.007 ຄັນ, ລົດໃຫຍ່ 2.204 ຄັນ. ສຳເລັດການຕິດແຜ່ນການໝາຍ ແລະ QR Code ເປັນຈຳນວນ 22.196 ຄັນ, ໃນນີ້ ມີລົດໃຫຍ່ 9.240 ຄັນ, ລົດຈັກ 12.956 ຄັນ ເທົ່າກັບ 64,9 % ຂອງລົດທີ່ຈະຕ້ອງຕິດແຜ່ນກາໝາຍ ແລະ ອອກບັດທັງໝົດ ໃນນີ້ ລົດໃຫຍ່ແມ່ນປະຕິບັດໄດ້ 82,6%, ລົດຈັກ 56,2 %.
- ດ້ານການປະຕິຮູບລັດວິສາຫະກິດ ໄດ້ສືບຕໍ່ສຸມໃສ່ການປະຕິຮູບ ແລະ ປັບປຸງລັດວິສາຫະກິດຍຸດທະສາດ ເຊິ່ງມີຈຳນວນ 19 ຫົວໜ່ວຍ. ໃນນັ້ນ, ມີ 5 ຫົວໜ່ວຍລັດວິສາຫະກິດຍຸດທະສາດເຄັ່ງຮ້ອນ ໂດຍ ໄດ້ສຸມໃສ່ສ້າງແຜນການປັບປຸງ ແລະ ຟື້ນຟູທຸລະກິດ, ແຜນແກ້ໄຂໜີ້ສິນ, ປັບປຸງໂຄງຮ່າງການຈັດຕັ້ງວິສາຫະກິດແບບ ໃໝ່, ຮັດກຸມ ແລະ ມີປະສິດທິພາບ. ພ້ອມນັ້ນ, ໄດ້ສາເລັດການສ້າງຕັ້ງຄະນະສະເພາະກິດປະຕິຮູບລັດວິສາຫະກິດ ພາຍໃຕ້ການຊີ້ນຳໂດຍກົງຂອງຫ້ອງວ່າສູນກາງພັກ.

**1.4 ວຽກຈຸດສຸມການສ້າງສະເຖຍລະພາບດ້ານເງິນຕາ**

ໄດ້ສຸມໃສ່ການແກ້ໄຂສະພາບຄ່າເງິນກີບ, ຄັງສຳຮອງເງິນຕາຕ່າງປະເທດ ແລະ ຄວບຄຸມອັດຕາເງິນເຟີ້ໂດຍ (1) ການປັບອັດຕາຕ່າງໆທີ່ຕິດພັນກັບເຄື່ອງມື ແລະ ກົນໄກຄຸ້ມຄອງນະໂຍບາຍເງິນຕາ ເຊັ່ນ: ອັດຕາດອກເບ້ຍພື້ນຖານຂອງ ທຫລ, ອັດຕາສ່ວນເງິນແຮຝາກບັງຄັບ, ຂອບການກຳນົດອັດຕາແລກປ່ຽນ ແລະ ອື່ນໆ ໃຫ້ສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນ, (2) ອອກຈຳໜ່າຍພັນທະບັດ ທຫລ ສະກຸນເງິນກີບ ໄລຍະສັ້ນ 6 ເດືອນ ສາມງວດ ມູນຄ່າ 12.000 ຕື້ກີບ, ອອກນິຕິກຳຈຳນວນໜຶ່ງ ສົມທົບກັບການປັບປຸງກົນໄກຕິດຕາມການນຳເຂົ້າທຶນ, ການນຳເຂົ້າ-ສົ່ງອອກສິນຄ້າ ເພື່ອຄຸ້ມຄອງການໄຫຼເຂົ້າ-ອອກຂອງເງິນຕາ ເຊິ່ງໄດ້ກຳນົດມາດຕະການສະເພາະ ໃນວຽກຈຸດສຸມຂອງຄະນະສະເພາະກິດ ຕາມຂໍ້ຕົກລົງເລກທີ 19/ຫສພ.

**1.5 ວຽກຈຸດສຸມຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ**

– ໄດ້ສ້າງ ແລະ ຮັບຮອງນິຕິກຳຕິດພັນກັບວາລະແຫ່ງຊາດດ້ານເສດຖະກິດ-ການເງິນ ໄດ້ 11 ສະບັບ;

– ໄດ້ປັບປຸງກົງຈັກການຈັດຕັ້ງລັດຕາມທິດກະທັດຮັດ ແລະ ມີປະສິດທິຜົນ ເຊິ່ງສາມາດຮັບຮອງຕຳແໜ່ງງານໄດ້ທັງໝົດ 833 ຫົວໜ່ວຍ, ຫຼຸດຈຳນວນລັດຖະກອນລົງ ເປັນຈຳນວນ 5.586 ຄົນ;

– ພ້ອມທັງໄດ້ຊຸກຍູ້ການຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ກຸ້ມຕົນເອງດ້ານງົບປະມານ ຈຳນວນ 5 ພາກສ່ວນ ແລະ ໄດ້ສຳເລັດການເກັບກຳຂໍ້ມູນ ຫົວໜ່ວຍວິຊາການທີ່ສາມາດມີລາຍຮັບດ້ານວິຊາການໃນໄລຍະຕໍ່ໜ້າ.

– ສຳເລັດການຄົ້ນຄວ້າສ້າງຮ່າງດຳລັດວ່າ ດ້ວຍການຫັນຫົວໜ່ວຍບໍລິຫານວິຊາການເປັນເຈົ້າຕົນເອງ ແລະ ຮ່າງດຳລັດວ່າດ້ວຍພາລະກອນ ຊຶ່ງໄດ້ສະເໜີຜ່ານໃນກອງປະຊຸມລັດຖະບານ ໃນເດືອນກັນຍາ 2023.

**ດ້ານຈຸດອ່ອນ ແລະ ຂໍ້ຄົງຄ້າງ:**

ຄຽງຄູ່ກັບຜົນສຳເລັດທີ່ໄດ້ກ່າວມານັ້ນ, ຄາດໝາຍຂອງວຽກຈຸດສຸມຈຳນວນໜຶ່ງ ຍັງບໍ່ສາມາດບັນລຸຕາມແຜນທີ່ກຳນົດໄວ້ ເຊິ່ງສະແດງອອກດັ່ງນີ້:

1. <u>ຖານການຜະລິດພາຍໃນ ແລະ ການຈັດຕັ້ງກຳລັງການຜະລິດ</u> ຍັງບໍ່ທັນເຂັ້ມແຂງ, ການຜະລິດເພື່ອທົດແທນການນຳເຂົ້າບໍ່ທັນມີຈຸດສຸມ ແລະ ເຮັດບໍ່ທັນໄດ້ຫຼາຍ, ການຈໍລະຈອນສິນຄ້າພາຍໃນ ຍັງກະຈາຍບໍ່ໄດ້ດີ ເຮັດໃຫ້ມີບາງເຂດຜະລິດເກີນ ແລະ ບາງເຂດບໍ່ພຽງພໍ. ການຜະລິດສົ່ງອອກ ຍັງເຮັດບໍ່ຮອບດ້ານ ສ່ວນໃຫຍ່ ແມ່ນການສົ່ງອອກວັດຖຸດິບ, ການຜະລິດອຸດສາຫະກຳເພື່ອສົ່ງອອກ ອາໄສວັດຖຸດິບຈາກພາຍນອກເພື່ອປຸງແຕ່ງຂັ້ນຕ່ຳ ແລ້ວສົ່ງອອກ ເຊິ່ງເຮັດໃຫ້ການສ້າງລາຍຮັບຈາກການສົ່ງອອກ ເຂົ້າສູ່ເສດຖະກິດ ຍັງບໍ່ໄດ້ເພີ່ມຂຶ້ນຫຼາຍ ແລະການໄຫຼເຂົ້າຂອງເງິນຕາຕ່າງປະເທດຕົວຈິງ ບໍ່ໄດ້ຮັບເຕັມສ່ວນ.

2. <u>ການຈັດຕັ້ງປະຕິບັດໂຄງການແຮ່ທົດລອງ ພົບພໍ້ບັນຫາຫຍຸ້ງຍາກຫຼາຍດ້ານ</u>:

– ບໍລິສັດລົງທຶນສ່ວນຫຼາຍບໍ່ປະຕິບັດຕາມມາດຖານເງື່ອນໄຂຂອງການລົງທຶນດ້ານແຮ່ທາດ ແລະ ຫຼາຍໂຄງການ ບໍ່ໄດ້ດຳເນີນຕາມເຕັກນິກວິຊາການ, ຂາດການຄົ້ນຄວ້າເລິກເຊິ່ງ ແລະ ດຳເນີນການໃນໄລຍະສັ້ນ.

– ເນື້ອທີ່ສຳປະທານ ພົບພໍ້ກັບບັນຫາການທັບຊ້ອນເນື້ອທີ່ກັນ ເຊິ່ງບັນຫາສຳຄັນ ແມ່ນຂາດຂໍ້ມູນ ແລະ ຂາດການປະສານງານທີ່ດີ.

– ພົບເຫັນບັນຫາການຂົນສົ່ງແຮ່ທາດເກີນນ້ຳໜັກ ແລະ ສົ່ງຜົນກະທົບຕໍ່ເສັ້ນທາງຫຼວງເປ່ເພ ໂດຍສະເພາະໃນທ້ອງຖິ່ນທີ່ມີໂຄງການຂຸດຄົ້ນ. ພ້ອມນັ້ນ, ຍັງມີບັນຫາສິ່ງແວດລ້ອມ ເປັນຕົ້ນ ນ້ຳຂຸ່ນ-ນ້ຳເປື້ອນຕາມສາຍນ້ຳສຳຄັນ ສົ່ງຜົນຕໍ່ສຸຂະພາບປະຊາຊົນທີ່ດຳລົງຊີວິດຕາມລຳນ້ຳ.

3. <u>ການຫັນເປັນທັນສະໄໝໃນຂະແໜງການການເງິນ</u> ຍັງບໍ່ທັນໄປຕາມແຜນການ, ການມີສ່ວນຮ່ວມຂອງຂະແໜງຕ່າງໆໃນການເຊື່ອມ ແລະ ແລກປ່ຽນຂໍ້ມູນດ້ານລາຍຮັບ ແລະ ລາຍຈ່າຍ ຍັງບໍ່ທັນເຂັ້ມແຂງ ແລະ ມີການປະສານສົມທົບທີ່ດີລະຫວ່າງຂະແໜງການທີ່ກ່ຽວຂ້ອງ;

4. <u>ການປະຕິບັດດຳລັດເລກທີ 599/ນຍ</u> ຍັງຊັກຊ້າ ແລະ ສະໜອງຂໍ້ມູນບັນຊີລົດລັດບໍ່ຄົບຖ້ວນ ແລະ ແກ່ຍາວເວລາ, ການຕິດແຜ່ນກາໝາຍຍັງບໍ່ສຳເລັດ ແລະ ບາງພາກສ່ວນບໍ່ຍອມຕິດກາໝາຍ ສົ່ງຜົນໃຫ້ການປະກອບພັນທະລາຍຮັບໃຫ້ງົບປະມານຍັງບໍ່ໄດ້ຕາມແຜນການທີ່ກຳນົດ.

5. <u>ການຫຼຸດລະດັບໜີ້ສິນ</u> ຍັງປະຕິບັດບໍ່ທັນໄດ້ຫຼາຍ, ບໍ່ທັນສາມາດແກ້ໄຂ<u>ບັນຫາຄວາມບອບບາງດ້ານເສດຖະກິດມະຫາພາກ</u> ໂດຍສະເພາະ ບັນຫາເງິນເຟີ້, ອັດຕາແລກປ່ຽນ ແລະ ອື່ນໆ ຊຶ່ງຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າແກ້ໄຂໃຫ້ແທດເໝາະກັບຕົວຈິງຕື່ມອີກ.

6. <u>ການແກ້ໄຂຄວາມບອບບາງດ້ານເສດຖະກິດມະຫາພາກ</u> ບໍ່ທັນບັນລຸໄດ້ຢ່າງເປັນພື້ນຖານ. ເຖິງແມ່ນວ່າໄດ້ມີຄວາມພະຍາຍາມແກ້ໄຂຢ່າງເອົາໃຈໃສ່, ລະດັບອັດຕາເງິນເຟີ ຍັງຢູ່ໃນລະດັບສູງ (ເງິນເຟີ້ເດືອນທັນວາ ປີ 2023 ຢູ່ລະດັບ 24,3%). ການອ່ອນຄ່າຂອງເງິນກີບທຽບກັບສະກຸນເງິນໂດຮາ ແລະ ບາດ ຍັງມີການເໜັງຕີງເພີ່ມຂຶ້ນເລັກໜ້ອຍ. ບັນຫາດັ່ງກ່າວ ຍັງສືບຕໍ່ສົ່ງຜົນກະທົບຕໍ່ການດໍາລົງຊີວິດຂອງປະຊາຊົນ, ພະນັກງານ, ທະຫານ-ຕໍາຫຼວດ ລວມທັງ ບັນຫາການລັ່ງໄຫຼຂອງແຮງງານລາວອອກໄປສູ່ຕ່າງປະເທດ.

## II. ສະພາບການຈັດຕັ້ງປະຕິບັດວຽກຈຸດສຸມຂອງວາລະແຫ່ງຊາດໄລຍະສືບຕໍ່ ໃນ 3 ເດືອນຕົ້ນ ປີ 2024

ພາຍຫຼັງສິ້ນສຸດໄລຍະການຈັດຕັ້ງປະຕິບັດວາລະແຫ່ງຊາດ ໄລຍະ 2021-23, ລັດຖະບານ ໄດ້ລົງເລິກຄົ້ນຄວ້າ ແລະ ປະສານສົມທົບກັບສະພາແຫ່ງຊາດ ເພື່ອເປັນເອກະພາບຕໍ່ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກຈຸດສຸມຂອງວາລະແຫ່ງຊາດ ໃນໄລຍະ 3 ປີ ຜ່ານມາ, ພ້ອມທັງກໍານົດວຽກຈຸດສຸມຂອງວາລະແຫ່ງຊາດເພື່ອເຊື່ອມເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະປີ 2024 ແລະ 2025, ໂດຍໃຫ້ການົດຈະແຈ້ງແຜນວຽກອັນໃດແມ່ນບູລິມະສິດທີ່ກໍານົດໃນວາລະແຫ່ງຊາດ ແລະ ວຽກອັນໃດແມ່ນແຜນປົກກະຕິ. ມາຮອດປັດຈຸບັນ, ກະຊວງແຜນການ ແລະ ການລົງທຶນ ໄດ້ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງເລິກຄົ້ນຄວ້າວຽກຈຸດສຸມວາລະແຫ່ງຊາດຂອງຕົນ ທີ່ຈະສຸມໃສ່ຈັດຕັ້ງປະຕິບັດ ໃນໄລຍະປີ 2024 ແລະ 2025 ເພື່ອເປັນການສະໜັບສະໜູນການປະຕິບັດຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງ 9 ບັນລຸຕາມແຜນທີ່ກໍານົດໄວ້. ສະນັ້ນ, ໃນໄລຍະ 3 ເດືອນຕົ້ນ ປີ 2024 ສາມາດສັງລວມຄວາມຄືບໜ້າ ດັ່ງນີ້:

**1) ວຽກຈຸດສຸມການສົ່ງເສີມການຜະລິດ-ການບໍລິການ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ.**

**<u>ຂະແໜງກະສິກໍາ ແລະ ປ່າໄມ້</u>:** ໄດ້ສືບຕໍ່ຊຸກຍູ້ການຜະລິດສິນຄ້າກະສິກໍາໃນລະດູແລ້ງ ໂດຍສະເພາະ ການຜະລິດສະບຽງອາຫານຕົ້ນຕໍຄື: ເຂົ້າ, ຊີ້ນ, ປາ ແລະ ໄຂ່ ໃຫ້ສາມາດຕອບສະໜອງຄວາມຕ້ອງການພາຍໃນໄດ້ໂດຍພື້ນຖານ. ໃນນີ້, ການຜະລິດເຂົ້ານາແຊງ ສາມາດປັກດາໄດ້ 90.998 ເຮັກຕາ ເທົ່າກັບ 93.4% ຂອງແຜນການ ຄາດຄະເນຜົນຜະລິດ 445.700 ໂຕນ; ປູກພືດໄດ້ ປະມານ 56.386 ເຮັກຕາ ເທົ່າກັບ 20,15% ຂອງແຜນການ ຄາດຄະເນຜົນຜະລິດ ປະມານ 380.752 ໂຕນ; ແລະ ຜະລິດຊີ້ນ, ໄຂ່ ແລະ ປາ ປະມານ 530.517 ໂຕນ ເທົ່າກັບ 99,9% ຂອງແຜນການ ເຊິ່ງສາມາດຄໍ້າປະກັນການບໍລິໂພກພາຍໃນໄດ້ພຽງພໍ. ພ້ອມກັນນັ້ນ, ສືບຕໍ່ຊຸກຍູ້ບັນດາຫົວໜ່ວຍການຜະລິດປຸ໋ຍ, ຝຸ່ນ ແລະ ຫົວອາຫານສັດ ໃຫ້ໄດ້ຕາມແຜນການຜະລິດ ແລະ ຕາມມາດຕະຖານການຜະລິດ, ພ້ອມທັງເຂັ້ມງວດຄຸ້ມຄອງການນໍາເຂົ້າສິນຄ້າປະເພດດັ່ງກ່າວ.

ນອກຈາກນັ້ນ, ໄດ້ຊຸກຍູ້ການຜະລິດພືດທີ່ໄດ້ຮັບການເຈລະຈາເປີດແລ້ວ ເຊັ່ນ: ສາລີແຊງ, ອ້ອຍ ແລະ ປະເພດຖົ່ວ ເຊິ່ງປະຕິບັດ 23.864 ເຮັກຕາ ເທົ່າ 3,44% ຂອງແຜນປີ ຄາດຄະເນຜົນຜະລິດ ປະມານ 98.045 ໂຕນ. ສໍາລັບມູນຄ່າການສົ່ງອອກ ໃນ 2 ເດືອນຕົ້ນປີ ສາມາດບັນລຸໄດ້ 321 ລ້ານໂດລາສະຫະລັດ ເທົ່າກັບ

29% ຂອງແຜນການປີ. ພືດທີ່ສົ່ງອອກພົ້ນເດັ່ນ ລວມມີ ມັນຕົ້ນ, ກ້ວຍ, ສາລີແຂງ, ອ້ອຍ, ໝາກໂມ ແລະ ແປ້ງມັນຕົ້ນ.

**<u>ຂະແໜງການຜະລິດແຮ່ທາດ</u>:** ສຳລັບໂຄງການແຮ່ທົດລອງ, ກະຊວງແຜນການ ແລະ ການລົງທຶນ ໄດ້ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໄດ້ລົງໄປກວດກາໂຄງການຕົວຈິງ ໂດຍສະເພາະ ໂຄງການຂຸດຄົ້ນແຮ່ເຫຼັກ, ແຮ່ຄຳເຄົ້າ ແລະ ຄຳຕົກຂ້ອນ ເພື່ອປະເມີນຄືນ ໂດຍໄດ້ອີງໃສ່ຜົນການຄົ້ນຄວ້າທິດທາງການພັດທະນາຂະແໜງບໍ່ແຮ່ໃນຕໍ່ໜ້າ. ຜ່ານການຕິດຕາມກວດກາທີ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງໄຊສົມບູນ ໄດ້ພົບວ່າການເກັບລາຍຮັບ ອີງໃສ່ເງື່ອນໄຂຂອງສັນຍາແມ່ນຍັງໜ້ອຍ ເມື່ອທຽບໃສ່ ເນື້ອທີ່ ທີ່ໄດ້ຮັບອະນຸມັດ ແລະ ບາງບໍລິສັດໄດ້ຂາຍຄຳທີ່ຂຸດມາໄດ້ເອງ ໂດຍບໍ່ໄດ້ແຈ້ງໃຫ້ລັດຖະບານຮັບຮູ້. ສະນັ້ນ, ຄວນເພີ່ມທະວີການຕິດຕາມກວດກາທຸກຂັ້ນຕອນຈາກຂັ້ນຕອນຂຸດຄົ້ນ ຈົນເຖິງຂັ້ນຕອນຈຳໜ່າຍຢ່າງເຂັ້ມງວດ ເພື່ອຮັກສາຜົນປະໂຫຍດຂອງລັດ ແລະ ປ້ອງກັນບໍ່ໃຫ້ມີການລັກລອບຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດ. (ຖາມຂໍ້ມູນ ໄດ້ກວດ ຈັກໂຄງການ)

**<u>ຂະແໜງການທ່ອງທ່ຽວ</u>:** ໄດ້ສືບຕໍ່ເພີ່ມທະວີການໂຄສະນາ ປີ ທ່ອງທ່ຽວລາວ (2024) ແລະ ຊຸກຍູ້ບັນດາກິດຈະກຳການທ່ອງທ່ຽວ ທີ່ໄດ້ກຳນົດໄວ້ ຮ່ວມກັບທຸລະກິດທີ່ຕິດພັນກັບຂະແໜງທ່ອງທ່ຽວ ໃຫ້ສາມາດເຄື່ອນໄຫວຕາມແຜນການ ຢູ່ໃນແຕ່ລະຂົງເຂດທົ່ວປະເທດ. ໃນໄລຍະ 3 ເດືອນ ຕົ້ນປີ 2024 ຄາດວ່າ ສາມາດຕອນຮັບນັກທ່ອງທ່ຽວຕ່າງປະເທດໄດ້ ປະມານ 1,1 ລ້ານເທື່ອຄົນ (ໃນມັງກອນ ແລະ ກຸມພາ ມີນັກທ່ອງທ່ຽວຕ່າງປະເທດ ປະມານ 744.906 ເທື່ອຄົນ).

**<u>ຂະແໜງການບໍລິການຂົນສົ່ງ ແລະ ໂລຈິສຕິກ</u>**: ໄດ້ສືບຕໍ່ຊຸກຍູ້ ແລະ ແກ້ໄຂບັນຫາຕ່າງໆ ເພື່ອໃຫ້ 3 ທ່າບົກທີ່ໄດ້ຮັບການພັດທະນາແລ້ວ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງເຕັມສ່ວນ, ພ້ອມທັງ ສືບຕໍ່ຂົນຂວາຍຊອກຫາຄູ່ຮ່ວມພັດທະນາ ເພື່ອມາພັດທະນາ 6 ທ່າບົກທີ່ຍັງເຫຼືອ ໂດຍສະເພາະ ທ່າບົກນາເຕີຍ ໄດ້ກຳນົດຈຸດທີ່ຕັ້ງ ແລະ ໄດ້ຄັດເລືອກເອົາບໍລິສັດຮ່ວມຫຸ້ນ ເຊິ່ງຢູ່ໃນຂັ້ນຕອນ ປຶກສາຫາລືຮ່ວມກັບບັນດາບໍລິສັດໃນການຖືຮຸ້ນໃນບໍລິສັດຮ່ວມທຶນພັດທະນາທ່າບົກນາເຕີຍ.

## 2) ວຽກຈຸດສຸມການສ້າງຖານລາຍຮັບໃຫ້ເຂັ້ມແຂງ

ຂະແໜງການທີ່ກ່ຽວຂ້ອງ ໄດ້ສືບຕໍ່ຊຸກຍູ້ການປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານ. ໃນນີ້, ໄດ້ສຸມໃສ່ກວດກາແບບໄວ ແລະ ລະດົມໃຫ້ບໍລິສັດມອບອາກອນລ່ວງໜ້າ, ພ້ອມນັ້ນ ການເພີ່ມອັດຕາອາກອນຊົມໃຊ້, ອາກອນມູນຄ່າເພີ່ມ, ການເຂັ້ມງວດຄຸ້ມຄອງເກັບລາຍຮັບທີ່ເປັນເງິນຕາ ແລະ ການຂະຫຍາຍຕົວຂອງກິດຈະການທີ່ຕິດພັນກັບການລົງທຶນ ແລະ ການທ່ອງທ່ຽວ ໄດ້ສ້າງເງື່ອນໄຂໃຫ້ການເກັບລາຍຮັບ ໃນໄຕມາດ I ປີ 2024 ສາມາດບັນລຸໄດ້ 13.576 ຕື້ກີບ ເທົ່າກັບ 27,09% ຂອງແຜນການປີ ຫຼື ເທົ່າກັບ 110% ຂອງແຜນການງວດ 01 (ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 66% ເປັນເງິນປະມານ 5.408 ຕື້ກີບ), ໃນນັ້ນ ລາຍຮັບພາຍໃນ ປະຕິບັດໄດ້ 12.711 ຕື້ກີບ ເທົ່າກັບ 28,20% ຂອງແຜນການປີ.

ນອກຈາກນັ້ນ, ໄດ້ສືບຕໍ່ຊຸກຍູ້ວຽກງານການຫັນເປັນທັນສະໄໝຂອງການຄຸ້ມຄອງລາຍຮັບ ໂດຍສະເພາະ ມາຮອດປັດຈຸບັນ ການຂະຫຍາຍລະບົບ TaxRis ກວມເອົາ 158.982 ຫົວໜ່ວຍ ເພີ່ມຂຶ້ນ ປະມານ 5.207 ຫົວໜ່ວຍ ຈາກປີ 2023 ເຊິ່ງໄດ້ສ້າງເງື່ອນໄຂການເກັບລາຍຮັບເພີ່ມຂຶ້ນ.

**3) ວຽກຈຸດສຸມການສົ່ງເສີມການປະຢັດ, ຍົກສູງປະສິດທິຜົນລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນ**

ສືບຕໍ່ປະຕິບັດດຳລັດເລກທີ 205/ລບ ແລະ ດຳລັດ 599/ລບ ໃຫ້ເຂັ້ມງວດຂຶ້ນ. ດ້ານລາຍຈ່າຍໄດ້ສຸມໃສ່ການເບີກຈ່າຍເງິນເດືອນ-ເງິນນະໂຍບາຍເປັນບູລິມະສິດ. ໃນໄຕມາດ I ປີ 2024, ດ້ານລາຍຈ່າຍ ສາມາດປະຕິບັດໄດ້ 9.378 ຕື້ກີບ ເທົ່າກັບ 15,96% ຂອງແຜນການປີ, ໃນນັ້ນ: ຂັ້ນສູນກາງປະຕິບັດໄດ້ 7.688 ຕື້ກີບ ເທົ່າກັບ 15,72% ຂອງແຜນການປີ ແລະ ຂັ້ນທ້ອງຖິ່ນປະຕິບັດໄດ້ 1.690 ຕື້ກີບ ເທົ່າກັບ 16,88% ຂອງແຜນການປີ. ນອກນັ້ນ, ສາມາດເບີກຈ່າຍໂຄງການລົງທຶນຂອງລັດໃນງວດ 01 ໃນລະດັບ 25% ຂອງແຜນການລົງທຶນປີ 2024 ໂດຍບໍ່ລໍຖ້າການແຈ້ງແຜນງົບປະມານຂອງຂະແໜງການເງິນເພື່ອໃຫ້ສາມາດກະຕຸ້ນເສດຖະກິດກ່ອນເຂົ້າສູ່ລະດູຝົນ.

ສຳລັບການປະຕິບັດດຳລັດວ່າດ້ວຍລົດຂອງລັດ, ໄດ້ສືບຕໍ່ສຸມໃສ່ການຕິດຕາມການນຳໃຊ້ລົດໃຫ້ສຳເລັດໃນປີ 2024, ແກ້ໄຂລົດຂອງພະນັກງານບຳນານໃຫ້ຂາດຕົວ, ພະນັກງານປະຈຳການ ທີ່ໄດ້ນຳໃຊ້ ເກີນກວ່າ 10 ປີ ດ້ວຍການສະສາງອອກເພື່ອສາມາດມີເກັບລາຍຮັບເຂົ້າງົບປະມານ , ກວດກາຄືນລົດຂອງໂຄງການທີ່ນຳໃຊ້ທຶນກູ້ຢືມຫຼືຊ່ວຍເຫຼືອລ້າ ທີ່ໄດ້ມອບໃຫ້ລັດແລ້ວໃຫ້ມານຳໃຊ້ເປັນຂອງສ່ວນລວມ ແລະ ປະຕິບັດມາດຕະການຢ່າງເຄັ່ງຄັດໃນການນຳໃຊ້ລົດຂອງລັດໃຫ້ຈອດໄວ້ທີ່ສຳນັກງານ-ຫ້ອງການ.

**4) ວຽກຈຸດສຸມສ້າງສະຖຽນລະພາບດ້ານເງິນຕາ**

ໄດ້ສຸມໃສ່ເຂັ້ມງວດການປະຕິບັດມາດຕະການແກ້ໄຂບັນດາອັດຕາແລກປ່ຽນ ແລະ ເງິນເຟີ້ ຕາມແຜນວຽກຈຸດສຸມຂອງຄະນະສະເພາະກິດ ຕາມຂໍ້ຕົກລົງ 19/ກມສພ ໂດຍສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ; ສືບຕໍ່ເກັບຊື້ເງິນຕາຕ່າງປະເທດເພື່ອໃຫ້ສາມາດຮອງຮັບການດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ສິນຄ້າບູລິມະສິດຈຳເປັນອື່ນໆ; ໄດ້ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ ໂດຍ ເປີດໃຫ້ຫົວໜ່ວຍໄດ້ເຂົ້າມາລົງທະບຽນ ແລະ ເປີດບັນຊີສະເພາະນຳທະນາຄານທຸລະກິດຫຼາຍຂຶ້ນກວ່າເກົ່າ (ໄດ້ອອກໃບຢັ້ງຢືນໃຫ້ຜູ້ນຳເຂົ້າ-ສົ່ງອອກ ເພື່ອໄປເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ທັງໝົດ ຈຳນວນ 2.236 ບໍລິສັດ ໃນນັ້ນ ມີ ບໍລິສັດນຳເຂົ້າ ຈຳນວນ 486 ບໍລິສັດ, ບໍລິສັດສົ່ງອອກ ຈຳນວນ 329 ແລະ ບໍລິສັດ ນຳຂົ້າ-ສົ່ງອອກ 1.350 ບໍລິສັດ ແລະ ເລັ່ງເຮັດວຽກກັບຫົວຫນ່ວຍທຸລະກິດສົ່ງອອກ ໃຫ້ນຳລາຍຮັບຈາກການສົ່ງອອກເຂົ້າມາຜ່ານລະບົບທະນາຄານ ຊຶ່ງກໍມີທ່າອ່ຽງດີຂຶ້ນ ຮອດ 60,65% ໃນໄລຍະຮອດທ້າຍໄຕມາດ ທີ 1 ຂອງປີ 2024; ພ້ອມນີ້, ມາຮອດເດືອນ ມີນາ 2024, ໄດ້ອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກສິນຄ້າ ແລະ ການບໍລິການ ສະບັບເລກທີ 333/ທຫລ, ລົງວັນທີ 07 ມີນາ 2024;

ການຄຸ້ມຄອງອັດຕາເງິນເຟີ້ ທຫລ ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຂຶ້ນຈາກ 7,5% ຕໍ່ປີ ມາເປັນ 8,5% ຕໍ່ປີ ແລະ ຍົກເລີກຜະລິດຕະພັນເງິນຝາກປະຈຳ ທຫລ ໄລຍະ 7 ວັນ ແລະ ຫັນຜະລິດຕະພັນດັ່ງກ່າວເປັນພັນທະບັດ ທຫລ ໄລຍະ 7 ວັນ ແທນ; ພ້ອມກັນນັ້ນ, ກໍ່ໄດ້

ຫັນການຈຳໜ່າຍພັນທະບັດຜ່ານຕະຫຼາດເງິນທຸກວັນ ມາເປັນ ຈຳໜ່າຍໃນທຸກໆວັນພະຫັດແທນ ແລະ ນຳໃຊ້ກົນໄກການປະມູນອັດຕາດອກເບ້ຍ ເປັນການປັບປຸງເຄື່ອງມືນະໂຍບາຍເງິນຕາໃຫ້ມີປະສິດທິຜົນຫຼາຍຂຶ້ນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ. ນອກນັ້ນ, ກໍ່ໄດ້ມີການເກັບຊື້ເງິນຕາ ແລະ ພັນທະບັດອ່າຍໜີ້ 3 ແຈ ຈຳນວນໜຶ່ງ.

ສຳເລັດການຕິດຕັ້ງລະບົບ CMS (Capital Flow Management System) ຢູ່ ທຫລ ແລະ ທົດລອງນຳໃຊ້ລະບົບດັ່ງກ່າວໃຫ້ມີຄວາມສະຖຽນ ແລະ ປອດໄພ ເພື່ອຮັບປະກັນການໃຊ້ງານຕົວຈິງ, ເພື່ອກະກຽມຄວາມພ້ອມໃນການເຊື່ອມໂຍງຂໍ້ມູນ ແລະ ການຕິດຕາມກະແສເງິນເຂົ້າ-ອອກຂອງຫົວໜ່ວຍທຸລະກິດເຂົ້າໃນລະບົບດັ່ງກ່າວ ທຫລ ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບ 7 ທະນາຄານທຸລະກິດ ທີ່ຢູ່ໃນຄະນະທົດລອງລະບົບ CMS;

**5) ວຽກຈຸດສຸມຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ:**

– ໄດ້ເລັ່ງປັບປຸງກົດໝາຍສົ່ງເສີມການລົງທຶນ ພ້ອມທັງຄົ້ນຄວ້າເຊື່ອມເອົານິຕິກຳກ່ຽວກັບເຂດເສດຖະກິດພິເສດ ເຂົ້າເປັນກົດໝາຍສະບັບດຽວກັນ. ນອກຈາກນັ້ນ, ຍັງອອກຂໍ້ຕົກລົງການແບ່ງຂັ້ນຄຸ້ມຄອງໂຄງການລົງທຶນພາກເອກະຊົນລະຫວ່າງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ສະບັບເລກທີ 35/ນຍ, ລົງວັນທີ 13 ກຸມພາ 2024 ແລະ ຄົ້ນຄວ້າ ແລະ ສະເໜີບັນຊີກິດຈະການຄວບຄຸມ 21 ລາຍການ ແລະ ກິດຈະການສຳປະທານ 22 ລາຍການ ເພື່ອສະເໜີລັດຖະບານ ຮັບຮອງ.

## III. ທິດທາງ ແລະ ແຜນວຽກຈຸດສຸມຂອງວາລະແຫ່ງຊາດ ໃນປີ 2024 ແລະ 2025

ຜ່ານການສັງລວມວຽກຈຸດສຸມຂອງວາບະແຫ່ງຊາດຮ່ວມກັບຂະແໜງການທີ່ກ່ຽວຂ້ອງ, ກະຊວງແຜນການ ແລະ ການລົງທຶນ ຂໍສະເໜີ ບາງຄາດໝາຍສູ້ຊົນ, ທິດທາງ ແລະ ວຽກຈຸດສຸມ ຮອດປີ 2025 ດັ່ງນີ້:

**ຄາດໝາຍສູ້ຊົນຮອດປີ 2025:**

- ສູ້ຊົນເຮັດໃຫ້ການຂະຫຍາຍຕົວຂອງເສດຖະກິດ ບັນລຸໄດ້ ໃນລະດັບ 5% ຫຼື ສູງກວ່າ. ໃນນີ້
  - ❖ ອັດຕາສ່ວນການສົ່ງອອກຜະລິດຕະພັນປຸງແຕ່ງສິນຄ້າກະສິກຳ ແລະ ປ່າໄມ້ ໃຫ້ບັນລຸໄດ້ 30% ຂຶ້ນໄປ ຂອງມູນຄ່າສົ່ງອອກຜະລິດຕະພັນກະສິກຳ-ປ່າໄມ້ລວມ.
  - ❖ ອັດຕາສ່ວນການສົ່ງອອກຜະລິດຕະພັນປຸງແຕ່ງແຮ່ທາດ ໃຫ້ໄດ້ຫຼາຍກວ່າ 50% ຂອງມູນຄ່າສົ່ງອອກຜະລິດຕະພັນແຮ່ທາດ ໃນປີ 2021-2023.
  - ❖ ການຜະລິດເພື່ອທົດແທນການນຳເຂົ້າ: 1) ສຸມໃສ່ການຜະລິດສະບຽງອາຫານ ໃຫ້ສະໜອງພາຍໃນພຽງພໍ ໂດຍສະເພາະ ເຂົ້າ, ຊີ້ນ, ປາ, ຜັກ ແລະ ໄຂ່, 2) ທົວອາຫານສັດໃຫ້ກວມເອົາ 70% ຂອງຄວາມຕ້ອງການຕະຫຼາດພາຍໃນ, 3) ຝຸ່ນຊີວະພາບ ໃຫ້ກວມ 50% ຂອງຕະຫຼາດພາຍໃນ, 4) ຜະລິດຊີມັງ ໃຫ້ໄດ້ສະເລ່ຍ 6,8 ລ້ານຕໍ່ປີ, 5) ເຫຼັກເສັ້ນ ແລະ ເຫຼັກຮູບປະພັນ ສະໜອງໃຫ້ໄດ້ 80% ຂອງຕະຫຼາດພາຍໃນ ຂຶ້ນໄປ, ແລະ ອື່ນໆ
  - ❖ ຈານວນນັກທ່ອງທ່ຽວຕ່າງປະເທດ ໃຫ້ບັນລຸໄດ້ 5 ລ້ານເທື່ອຄົນຕໍ່ປີ.
- ລາຍຮັບງົບປະມານ ໃຫ້ບັນລຸໄດ້ ລະຫວ່າງ 18% ຂອງ GDP.

– ສູ້ຊົນອັດຕາເງິນເຟີ້ ຢູ່ໃນລະດັບ ບໍ່ເກີນ 9% ຫຼື 1 ຕົວເລກ ແລະ ຮັກສາອັດຕາແລກປ່ຽນລະຫວ່າງເງິນກີບ/ໂດລາ ແລະ ກີບ/ບາດ ບໍ່ໃຫ້ເໜັງຕີງສູງ.
– ສູ້ຊົນໃຫ້ມູນຄ່າການສົ່ງອອກ ແລະ ນຳເຂົ້າເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ ເກີນ 70% ຂຶ້ນໄປ, ລະດັບຄັງສຳຮອງເງິນຕາຕ່າງປະເທດ ຢູ່ສູງກວ່າ ລະດັບ 5 ເດືອນ.

**1) ວຽກຈຸດສຸມການຜະລິດພາຍໃນເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກ:**

– ສຸມໃສ່ການຜະລິດຄ້ຳປະກັນສະບຽງອາຫານ ໃຫ້ສາມາດຕອບສະໜອງການຊົມໃຊ້ພາຍໃນ ໂດຍສະເພາະ ປະເພດ ເຂົ້າ, ຊີ້ນ, ປາ, ຜັກ ແລະ ໄຂ່ ໃຫ້ສາມາດສະໜອງພາຍໃນຢ່າງພຽງພໍ, ພ້ອມທັງ ຈັດຕັ້ງການຈໍລະຈອນສິນຄ້າດັ່ງກ່າວ ໃຫ້ສາມາດສະໜອງຈາກເຂດຜະລິດເຫຼືອໄປສູ່ເຂດທີ່ຜະລິດບໍ່ພໍ ໄປຄຽງຄູ່ກັບການນຳໃຊ້ມາດຕະການຈຳນວນໜຶ່ງທີ່ຫຼຸດຜ່ອນການນຳເຂົ້າສິນຄ້າສະບຽງອາຫານດັ່ງກ່າວ ໃນເຂດແດນຊາຍຕ່າງໆ ຕາມເງື່ອນໄຂທີ່ສາມາດດຳເນີນໄດ້ ແລະ ບໍ່ຜິດຕໍ່ລະບຽບການຄ້າສາກົນ ແລະ ພາກພື້ນ.

– ສຸມໃສ່ສ້າງເງື່ອນໄຂ ແລະ ຊຸກຍູ້ຜູ້ປະກອບການ ເຂົ້າຮ່ວມໃນໂຄງການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າໃນ 2 ປະເພດບັນຊີ ໂດຍສະເພາະ ບັນຊີພືດ-ສັດຫ້າມການນຳເຂົ້າ. ພ້ອມນັ້ນ, ສືບຕໍ່ຊຸກຍູ້ການຜະລິດພືດທີ່ໄດ້ຮັບໂຄຕ້າສົ່ງອອກແລ້ວ ກັບປະເທດເພື່ອນບ້ານ ໂດຍສະເພາະ ເລັ່ງປັບປຸງມາດຕະຖານ ແລະ ຄຸນນະພາບຕາມເງື່ອນໄຂທີ່ໄດ້ກຳນົດໃນສັນຍາແລ້ວ ຕິດພັນກັບການຍົກຍືນກະສິກຳທີ່ດີ; ສູ້ຊົນໃຫ້ມີການສົ່ງອອກຕົວຈິງຫຼາຍຂຶ້ນ.  ໃນນັ້ນ, ເລັ່ງຂະຫຍາຍແຫຼ່ງທຶນໃຫ້ແກ່ກຸ່ມການຜະລິດ ແລະ ດຶງດູດໂຄງການລົງທຶນເຂົ້າໃສ່ການຜະລິດດັ່ງກ່າວໃຫ້ຫຼາຍຂຶ້ນ ໂດຍສະເພາະ ໃນເຂດການຜະລິດທີ່ມີທ່າແຮງ ໃນທົ່ວປະເທດ.

– ຮີບຮ້ອນຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ກຸ່ມການຜະລິດ, ສະຫະກອນການຜະລິດ ທີ່ມີທ່າແຮງ ໂດຍສະເພາະພືດທີ່ໂຄຕ້າສົ່ງອອກ ແລະ ຄວາມຕ້ອງການສູງຈາກປະເທດເພື່ອນບ້ານ ເຊິ່ງຕ້ອງໄດ້ມີໂຄງການສົ່ງເສີມທີ່ເປັນຕົວແບບໃຫ້ເກີດຂຶ້ນ.

– ເລັ່ງຈັດຕັ້ງການຜະລິດປຸງແຕ່ງສະບຽງອາຫານ ແລະ ຫັດຖະກຳ ທີ່ເປັນລະບົບຕ່ອງໂສ້ ເພື່ອສະໜອງໃຫ້ແກ່ຂະແໜງການທ່ອງທ່ຽວພາຍໃນ ໂດຍສະເພາະ ແຂວງຫຼວງພະບາງ, ແຂວງວຽງຈັນ, ນະຄອນຫຼວງວຽງຈັນ, ແຂວງຈຳປາສັກ ແລະ ແຂວງອື່ນໆ.

– ຄົ້ນຄວ້າອອກ ແລະ ປະຕິບັດນະໂຍບາຍສົ່ງເສີມສະເພາະ ສຳລັບອຸດສາຫະກຳປຸງແຕ່ງພາຍໃນ ທີ່ນອນໃນຍຸດທະສາດອຸດສາຫະກຳແຫ່ງຊາດຈຳນວນໜຶ່ງ ເປັນຕົ້ນ ການຜະລິດວັດສະດຸກໍ່ສ້າງ, ການປຸງແຕ່ງກະສິກຳ ເຊັ່ນ: ຢາງພາລາ, ເຍື່ອໄມ້, ນ້ຳຕານ, ແປ້ງມັນຕົ້ນ ແລະ ອື່ນໆ ທີ່ມີໜໍ່ແໜງການຜະລິດພາຍໃນແລ້ວ ໃນບາງແຂວງທີ່ທ່າແຮງ.

– ສຳລັບໂຄງການທົດລອງຂຸດຄົ້ນຄວ້າແຮ່ທາດ, ຂະແໜງການທີ່ກ່ຽວຂ້ອງ ເລັ່ງກວດກາຄືນບັນດາໂຄງການທີ່ໄດ້ອະນຸມັດແລ້ວ ໃນໄລຍະທົດລອງ ແລະ ຄົ້ນຄວ້າຫັນເຂົ້າສູ່ກົນໄກປົກກະຕິໃຫ້ໄວ. ນອກນັ້ນ, ຢຸດຕິການອະນຸມັດໃໝ່ ແລະໂຄງການທີ່ບໍ່ມີປະສິດທິຜົນ ໂດຍສະເພາະ ໂຄງການຂຸດຄົ້ນຄຳຕົກຂ້ອນ. ຊຸກຍູ້ໂຄງການທົດລອງຊັບສິນດິຈິຕ໋ອນໃຫ້ສາມາດເຄື່ອນໄຫວຕາມແຜນການ. (ສະເໜີຂະແໜງການທີ່ກ່ຽວຂ້ອງປະກອບຄຳເຫັນເພີ່ມຕື່ມ)

– ເລັ່ງແກ້ໄຂບັນຫາຂາດແຮງງານພາຍໃນ ໂດຍສຸມໃສ່ການຂະຫຍາຍຂໍ້ມູນຂ່າວສານດ້ານການຈ້າງງານ, ອອກນະໂຍບາຍສົ່ງເສີມໃຫ້ຜູ້ປະກອບການເພີ່ມຜົນຕອບແທນ ແລະ ສິ່ງຈູງໃຈຕໍ່ແຮງງານໃຫ້ເພີ່ມຂຶ້ນ ແລະ ອື່ນໆ ເພື່ອບໍ່ໃຫ້ແຮງງານ ລັ່ງໄຫຼອອກໄປອອກແຮງງານຢູ່ປະເທດ. ນອກຈາກນັ້ນ, ເລັ່ງຂະຫຍາຍການລົງທະບຽນແຮງງານຕ່າງປະເທດ ເພື່ອໃຫ້ສາມາດເກັບອາກອນລາຍໄດ້ເຂົ້າສູ່ງົບປະມານ.

– ເລັ່ງໂຄສະນາ ແລະ ຕ້ອນຮັບນັກທ່ອງທ່ຽວ ໃນປີທ່ອງທ່ຽວລາວ ປີ 2024 ໂດຍເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວ ໂດຍສະເພາະ ປັບປຸງເສັ້ນທາງທີ່ສໍາຄັນເຂົ້າສູ່ເຂດທ່ອງທ່ຽວທີ່ມີຊື່ສຽງ ແລະ ປັບປຸງຂອດບໍລິການ ແລະ ການຄຸ້ມຄອງແຫຼ່ງທ່ອງໃຫ້ໄດ້ມາດຕະຖານສາກົນ.

**2) ວຽກຈຸດສຸມການສ້າງຖານລາຍຮັບໃຫ້ເຂັ້ມແຂງ:**

– ສືບຕໍ່ປະຕິບັດຄໍາສັ່ງເລກທີ 18/ນຍ ໂດຍສະເພາະ ວຽກຈຸດສຸມທີ່ຍັງບໍ່ທັນບັນລຸ ໃນໄລຍະ 2021-23. ພ້ອມນັ້ນ, ຄົ້ນຄວ້າປັບເພີ່ມອັດຕາອາກອນ ທີ່ເປັນທ່າແຮງດ້ານການເກັບລາຍຮັບ, ພ້ອມທັງ ສຸມປະຕິບັດອັດຕາອາກອນທີ່ປັບປຸງໃໝ່ ເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ອື່ນໆ;

– ເລັ່ງພັດທະນາລະບົບ ແລະ ເຊື່ອມຖານຂໍ້ມູນດ້ານລາຍຮັບກັບຂະແໜງການທີ່ມີລາຍຮັບສໍາຄັນໃຫ້ສໍາເລັດ ເປັນຕົ້ນ ລະບົບຄຸ້ມຄອງແຮງງານ, ລະບົບຄຸ້ມຄອງການອອກໃບຕາດິນ ແລະ ລະບົບອື່ນໆ;

– ສໍາເລັດການຍົກລະດັບລະບົບ TaxRIS ໄລຍະ 2, ໃນນີ້ ເລັ່ງປັບປຸງຂີດຄວາມສາມາດຂອງລະບົບໃຫ້ເປັນລະບົບຖານຂໍ້ມູນຂະໜາດໃຫ່ຍ ຊຶ່ງສຸມໃສ່ພັດທະນາໂມດູນເພີ່ມເຕີມຄື: ໂມດູນການແຈ້ງມອບອາກອນລາຍໄດ້ບຸກຄົນ, ໂມດູນການສົ່ງອາກອນຄືນ, ໂມດູນການຄຸ້ມຄອງໃບເກັບເງິນເອເລັກໂຕນິກ ແລະ ອື່ນໆ.

– ສືບຕໍ່ເຮັດທົດລອງມອບຫົວໜ່ວຍທຸລະກິດໃຫ້ທ້ອງຖິ່ນຄຸ້ມຄອງ; ເລັ່ງທວງພັນທະຈາກທຸລະກິດຂະໜາດໃຫ່ຍ ແລະ ໂຄງການທົດລອງທີ່ຍັງຄ້າງຊໍາລະ ພ້ອມທັງປະຕິບັດການປັບໃໝ.

**3) ວຽກຈຸດສຸມການສົ່ງເສີມການປະຢັດ, ຍົກສູງປະສິດທິຜົນລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນ:**

– ເລັ່ງສໍາເລັດການເກັບຂໍ້ມູນ ແລະ ລົງທະບຽນລົດຂອງລັດ ຢູ່ໃນແຂວງທີ່ບໍ່ທັນສໍາເລັດ, ພ້ອມທັງປະເມີນຄືນລາຍຈ່າຍງົບປະມານອັນໃດທີ່ຈະຫຼຸດຜ່ອນລົງຈາກການຄຸ້ມຄອງລົດລັດໃນໄລຍະຕໍ່ໜ້າ; ສຸມໃສ່ການປະຕິບັດລະບຽບ ແລະ ນິຕິກໍາທີ່ໄດ້ກໍານົດອອກໃຫ້ເຄັ່ງຄັດ;

– ເຄັ່ງຄັດປະຕິບັດມາດຕະການຍົກປະສິດທິຜົນຂອງໂຄງການລົງທຶນລັດ ໄປພ້ອມກັບຫຼຸດຜ່ອນການຄ້າງຊໍາລະໜີ້ສິນຂອງໂຄງການລົງທຶນລັດທີ່ເປັນບູລິມະສິດ ແລະ ມີຜົນກະທົບຕໍ່ເສດຖະກິດ;

– ສືບຕໍ່ແກ້ໄຂບັນຫາໜີ້ສິນສາທາລະນະ ໂດຍຫຼຸດການກູ້ຢືມໃໝ່ຫຼາຍ ແລະ ສາລັບໂຄງການທີ່ບໍ່ມີປະສິດທິຜົນຫຼາຍ, ສືບຕໍ່ເຈລະຈາເລື່ອນຊໍາລະໜີ້ຈໍານວນໜຶ່ງ, ຊອກແຫຼ່ງກູ້ຢືມທີ່ມີດອກເບ້ຍຕໍ່າ ເພື່ອຊາລະໜີ້ໄລຍະສັ້ນ, ການຫັນໜີ້ເປັນທຶນສໍາລັບໂຄງການທີ່ປະຕິບັດໄດ້ ແລະ ອື່ນໆ.

**4) ວຽກຈຸດສຸມສ້າງສະຖຽນລະພາບດ້ານເງິນຕາ:**

– ສຸມໃສ່ປະຕິບັດມາດຕະການຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 19/ກມສພ ໃຫ້ບັນລຸຕາມແຜນ. ສະເໜີຫັນວຽກຈຸດສຸມດັ່ງກ່າວ ເຂົ້າສູ່ບັນດາແຜນວຽກຂອງຄະນະສະເພາະກິດຕ່າງໆ ທີ່ລັດຖະບານ ໄດ້ແຕ່ງຕັ້ງຂຶ້ນແລ້ວ.

– ເຂັ້ມງວດປະຕິບັດນິຕິກຳ ແລະ ລະບຽບການທີ່ຕິດພັນກັບການຄຸ້ມຄອງເງິນຕາຕ່າງປະເທດຂອງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ການຄຸ້ມຄອງລາຍຮັບຈາກການນຳເຂົ້າ-ສົ່ງອອກ ແລະ ການລົງທຶນ; ຕິດຕາມກວດກາປະຕິບັດມາດຕະການຕໍ່ຜູ້ລະເມີດແລກປ່ຽນເງິນຕາທີ່ບໍ່ຖືກລະບຽບການຢ່າງເຂັ້ມງວດ.

**5) ວຽກຈຸດສຸມຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ:**

- ສູ້ຊົນໃຫ້ສຳເລັດການຄົ້ນຄວ້າ ແລະ ຮັບຮອງນິຕິກຳຈຳນວນໜຶ່ງ ເປັນຕົ້ນ ກົດໝາຍສົ່ງເສີມການລົງທຶນ ພ້ອມທັງເຂັ້ມງວດປະຕິບັດລະບຽບກົດໝາຍຕິດພັນວາລະແຫ່ງຊາດທີ່ກຳນົດອອກ.
- ສືບຕໍ່ປັບປຸງກົງຈັກ ແລະ ຫຼຸດຜ່ອນຈຳນວນພະນັກງານ ແລະ ລັດຖະກອນຕາມທິດກະທັດຮັດ ແລະ ມີປະສິດທິຜົນ ແລະ ສືບຕໍ່ຊຸກຍູ້ແຜນວຽກງານ 3 ສ້າງ.
- ສືບຕໍ່ການຫັນຫົວໜ່ວຍວິຊາການພາກລັດໄປສູ່ການກຸ້ມຕົນເອງທີ່ກຳນົດໄວ້ແລ້ວໃຫ້ສຳເລັດ ແລະ ບາງຂະແໜງການ ຊຸກຍູ້ໃຫ້ມີການປະຕິບັດສັນຍາແບບພາລາກອນ ເທື່ອລະກ້າວ.

**IV. ຂໍ້ສະເໜີ:**

- ການຈັດຕັ້ງປະຕິບັດວຽກຈຸດສຸມຂອງວາລະແຫ່ງຊາດ ຮອດປີ 2025 ສະເໜີໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ເພີ່ມທະວີຜັນຂະຫຍາຍໃນການເຊື່ອມສານວຽກງານຈຸດສຸມຂອງວາລະແຫ່ງຊາດທີ່ໄດ້ກຳນົດຈາກມະຕິຂອງສະພາແຫ່ງຊາດເລກທີ 111/ສພຊ, ລົງວັນທີ 21 ພະຈິກ 2023 ເຂົ້າສູ່ແຜນພັດທະນາຂອງຂະແໜງການຕົນ, ຂອງທ້ອງຖິ່ນ ເພື່ອສັງລວມເຂົ້າສູ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນໄລຍະທ້າຍສະໄໝ, ໃຫ້ຖືວຽກງານວາລະແຫ່ງຊາດເປັນວຽກເລັ່ງດ່ວນ, ຈຳເປັນ ເຊິ່ງຕ້ອງສະແດງຄາດໝາຍ ແລະ ມາດຕະການໃຫ້ເຫັນຈະແຈ້ງໃນການຊຸກຍູ້ຈັດຕັ້ງປະຕິບັດວຽກຈຸດສຸມດັ່ງກ່າວໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ໂດຍໃຫ້ລາຍງານເປັນບົດດຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.
- ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງສືບຕໍ່ວຽກງານທີ່ເລີ່ມມີໜໍ່ແໜງມາແລ້ວ ເປັນຕົ້ນ ວຽກການສົ່ງເສີມການຜະລິດເພື່ອເປັນຖານລາຍຮັບທີ່ໝັ້ນຄົງໂດຍລົງເລິກຄົ້ນຄວ້າ ແລະ ສ້າງເປັນໂຄງການສົ່ງເສີມຢ່າງເປັນຮູບປະທຳ ຖ້າສາມາດສ້າງເປັນໂຄງການຕົວແບບຈະເປັນການດີ ໂດຍສະເພາະ ການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກ ເຊິ່ງຕ້ອງມີການຈັດສັນງົບປະມານຈຳນວນໜຶ່ງເພື່ອສາມາດຈັດຕັ້ງປະຕິບັດໄດ້.
- ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ລົງໄປຊຸກຍູ້ແຜນງານຂອງຕົນ ທີ່ຈະກຳນົດເປັນວຽກສະເພາະຕິດພັນກັບວາລະແຫ່ງຊາດ ກັບທ້ອງຖິ່ນຕ່າງໆ ໂດຍສະເພາະ ເຂດທີ່ມີທ່າແຮງໃນການຜະລິດ ແລະ ມີຖານລາຍຮັບງົບປະມານທີ່ສູງ ແລະ ເຂັ້ມແຂງ, ເຊິ່ງຕ້ອງໄດ້ຈັດສັນງົບປະມານຈຳນວນໜຶ່ງ ໃຫ້ສາມາດເຄື່ອນໄຫວວຽກງານຢ່າງເຕັມສ່ວນ.
- ສະເໜີໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ກຳນົດຄາດໝາຍ ແລະ ຕົວຊີ້ວັດແຕ່ລະວຽກຈຸດສຸມຂອງຕົນຢ່າງຈະແຈ້ງ, ອີງໃສ່ພື້ນຖານຕົວຊີ້ວັດທີ່ໄດ້ສະຫຼຸບແລ້ວ ໃນທ້າຍໄລຍະ 2021-23.

ມາຮອດນີ້, ການລາຍງານຂອງກະຊວງແຜນການ ແລະ ລົງທຶນ ແມ່ນສິ້ນສຸດແລ້ວ, ຂໍສະເໜີໃຫ້ບັນດາສະຫາຍທີ່ປະຊຸມປະກອບຄຳຄິດຄຳເຫັນເພີ່ມຕື່ມ ໂດຍສະເພາະ ທິດຊີ້ນຳທີ່ຕິດພັນກັບ ວຽກຈຸດສຸມຂອງວາລະ

ແຫ່ງຊາດ ທີ່ຈະເພີ່ມທະວີຈັດຕັ້ງປະຕິບັດ ໃນໄລຍະທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9 ສາມາດບັນລຸຜົນ ແລະ ສາມາດແກ້ໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໃຫ້ຜ່ອນຄາຍລົງ.

**ຂໍຂອບໃຈ**

-------------------------------------------